# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 8 ມິຖຸນາ 2008 (6-8-2008)

## ກົດເກນສາມຂໍ້ສຳລັບການເຮັດວຽກທີ່ສລາດ

**ຂໍ້ພຣະຄັມພີໃນບົດຮຽນ:** ສຸພາສິດ 6:1-15

**ພຣະຄັມພີແຫ່ງຄວາມຈິງ:** ສະຕິປັນຍາທີ່ພົບໃນພຣະຄັມພີສອນໄພ່ພົນຂອງພຣະເຈົ້າໃຫ້ລະມັດລະວັງຕໍ່ການເຂົ້າພົວພັນໃນພັນທະທີ່ບໍ່ໄດ້ໄຕ່ຕອງຖ້ວນຖີ່, ແຕ່ໃຫ້ປະຕິບັດຢ່າງສລາດສລຽວ, ແລະໃຫ້ຫລີກເວັ້ນໃນການເຮັດບໍ່ດີຕໍ່ຄົນອື່ນ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ວຍທ່ານໃນການໃຊ້ສະຕິປັນຍາຈາກເບື້ອງເທິງໃນຊີວິດປະຈຳວັນຂອງທ່ານໂດຍ:

- ການສັງເກດເຫັນນິສັຍແລະການປະພຶດທີ່ສາມາດທຳລາຍຊີວິດການທຳງານຂອງທ່ານ; ແລະ
- ການຕັດສິນໃຈແນ້ວແນ່ທີ່ຈະຕິດຕາມນິສັຍທີ່ສລາດແລະການປະພຶດໃນຊີວິດການທຳງານຂອງທ່ານ.

## ຂ້າພະເຈົ້າຈະສາມາດມີຊີວິດການທຳງານທີ່ດີກວ່າເກົ່າໄດ້ຢ່າງໃດ?

ທິສດີທີ່ຄົນສ່ວນຫລາຍນິຍົມຊົມຊອບແລະເຂົ້າໃຈຜິດນັ້ນກໍຄືວ່າພຣະເຈົ້າສາບແຊ່ງຄວາມຜິດບາບຂອງອາດາມ ແລະເອວາໂດຍໃຫ້ມະນຸດທຸກໆຄົນທີ່ເກີດມາພາຍຫລັງ ພວກເຂົາຕ້ອງໄດ້ເຮັດວຽກທຳງານຫາລ້ຽງຊີບຕັ້ງແຕ່ນັ້ນເປັນຕົ້ນມາ. ແຕ່ວ່າ, ຄວາມເປັນຈິງແລ້ວການເຮັດວຽກງານຫາລ້ຽງຊີບແມ່ນພຣະປະສົງຂອງພຣະເຈົ້າທີ່ໃຫ້ເປັນພາກສ່ວນນຶ່ງຂອງຊີວິດມະນຸດທີ່ເກີດຂຶ້ນມາໃນຕອນເລີ້ມຕົ້ນ(ປຖມກ 2:15). ຜົນເສັຽຈາກຄວາມຜິດບາບຂອງພວກເຂົາແມ່ນການປະກອບວຽກງານນັ້ນຕ້ອງຍາກຂຶ້ນຕື່ມ(ປຖມກ 3:17-19).

ບໍ່ມີຜູ້ໃດຖືກຍົກເວັ້ນຈາກກົດອັນນີ້ໄດ້ເລີຍ. ໃນຂນະທີ່ບໍ່ແມ່ນທຸກຄົນມີ "ຫນ້າທີ່ວຽກການ" ເຮັດເປັນອາຊີບປະຈຳວັນ. ແຕ່ວ່າພຣະເຈົ້າປະທານວຽກບາງຢ່າງໃຫ້ແຕ່ລະຄົນ, ການງານຂອງສ່ວນບຸກຄົນນັ້ນແມ່ນມີສ່ວນຕໍ່ໂລກນີ້. ຄວາມເພິ່ງພໍໃຈຂອງສ່ວນບຸກຄົນເກີດຈາກຜົນຂອງການເຮັດວຽກງານທີ່ສລາດ.

ໃນຂນະທີ່ພວກເຮົາພະຍາຍາມເຮັດວຽກຢ່າງຫນັກຫນ່ວງ, ພວກເຮົາກໍສາມາດເຮັດວຽກງານຢ່າງສລາດໄດ້ດ້ວຍ.ໃນພຣະທັມສຸພາສິດບົດທີ່ຫົກບອກພວກເຮົາເຖິງກົດແບບກວມລວມ (ບໍ່ແມ່ນບັນຍັດທີ່ສະເພາະເຈາະຈົງ) ໃຫ້ພວກເຮົາປະຕິບັດຕາມເພື່ອໃຫ້ຊີວິດການທຳງານຂອງພວກເຮົາດີຂຶ້ນກ່ວາເກົ່າ. ເບິ່ງເຫມືອນວ່າມັນບໍ່ກ່ຽວເນື່ອງກັນຖ້າເບິ່ງແບບເຜີນໆ, ເມື່ອພິຈາຣະນາຂໍ້ບັນຍັດເຫລົ່ານີ້ໃຫ້ຖີ່ຖ້ວນແລ້ວມັນຈະເປີດເຜີຍໃຫ້ເຫັນເຖິງສາມທາງທີ່ສລາດຕໍ່ການປະກອບວຽກງານໃຫ້ດີຂຶ້ນ.

## ສຶກສາພຣະຄັມພີ

### 1. ຕ້ອງລະມັດລະວັງຕໍ່ການພົວພັນກັບພັນທະທີ່ບໍ່ໄດ້ຄິດໃຫ້ລະອຽດ (ສຸພາສິດ 6:1-5)

"ຫນີ້ຖ້ວມຫົວ, ຕ້ອງເອົາຕົວໄປທຳງານ" ຄວາມຫມາຍເບິ່ງຄືວ່າແມ່ນການໃຊ້ຫນີ້ບຸນຄຸນ, ນີ້ຫລືຄືເປົ້າຫມາຍຂອງການ ເຮັດວຽກ ການ? ແນ່ນອນວ່າມັນຄົງມີຄວາມຫມາຍຫລາຍໄປກວ່ານີ້ອີກ. ມີທາງດຽວທີ່ເຮັດໃຫ້ເກີດຄວາມພໍໃຈໃນວຽກງານຂອງພວກເຮົາ ຄືການຫລີກເວັ້ນຈາກການພົວພັນກັບພັນທະດ້ານການເງິນທີ່ບໍ່ໄດ້ຄິດໃຫ້ລະອຽດຊຶ່ງມັນສາມາດໃຫ້ເຮັດວຽກຫນ້ອຍລົງແລະກໍບໍ່ເຮັດໃຫ້ເຮົາໄດ້ທຳງານແບບອອກເຫື່ອເທແຮງ. ການປະກອບອາຊີບວຽກ

ງານອັນນຶ່ງ (ບັງຄັ້ງກໍສອງແຫ່ງ) ເພື່ອຫາເງິນມາໃຊ້ຫນີ້ອັນນີ້ບໍ່ແມ່ນຈຸດປະສົງອັນສູງສຸດຂອງພຣະເຈົ້າສຳລັບຊີວິດຂອງພວກເຮົາ. ພຣະຄຳຂອງພຣະອົງເຕືອນພວກເຮົາເອົາໄວ້ວ່າໃຫ້ຫລີກເວັ້ນຈາກການພົວພັນກ່ຽວກັບດ້ານການເງິນທີ່ເປັນພັນທະສັນຍາທີ່ບໍ່ໄດ້ຄິດໃຫ້ຖີ່ຖ້ວນ. ພັນທະສັນຍາທີ່ວ່ານີ້ບາງທີກໍອາດຈະເປັນການລົງຊື່ລວມກັບຄົນອື່ນໃນການຊື້ບ້ານ, ຊຶ່ງເປັນ**ການຮັບປະກັນຄວາມປອດພັຍໃຫ້ເພື່ອນບ້ານ**. ພັນທະສັນຍາອີກແບບນຶ່ງຄືການເຊັນສັນຍາເອົາສິນເຊື່ອໂດຍການຢືມເງິນຫລືຊື້ບາງຢ່າງໂດຍໃຊ້ບັດສິນເຊື່ອ.

ໂຊໂລໂມນໄດ້ຍອມຮັບວ່າລູກຊາຍຂອງລາວອາດມີສ່ວນເຂົ້າໃນບ້ວງແຮ້ວຂອງພັນທະສັນຍາດ້ານການເງິນຮຽບຮ້ອຍແລ້ວ.ເຫມືອນດັ່ງຂ້າພະເຈົ້າທີ່ມີລູກຊາຍເຂົ້າຮຽນປີທຳອິດທີ່ວິທະຍາລັຍ, ຂ້າພະເຈົ້າກໍເຫັນວ່າພວກບໍຣິສັດຂາຍບັດສິນເຊື່ອກໍສົ່ງຈົດຫມາຍມາຫາຢູ່ບໍ່ຂາດ. ແລະມັນຍັງໄດ້ສົ່ງມາກ່ອນຫນ້າຕອນທີ່ລາວຍັງບໍ່ທັນເລີ້ມເຂົ້າຮຽນອີກດ້ວຍ. ຫລາຍໆຄົນກໍເລີ້ມຕໍ່ວ່າກັບການໂຄສະນາຂອງພວກບໍຣິສັດທີ່ໃຫ້ກູ້ຢືມເງິນນັ້ນ. ຄົນແກ່ທີ່ຜ່ານປະສົບການຂອງຊີວິດກ່ຽວກັບເຣື່ອງນີ້ຕ້ອງຊອກວິທີທີ່ຈະສັ່ງສອນພວກຄົນລຸ້ນຫລັງຂອງພວກເຂົາ.

ຄຳແນະນຳຂອງໂຊໂລໂມນແມ່ນດີຫລາຍ: ຊອກຫາທາງອອກຈາກບ້ວງແຮ້ວຝ່າຍການເງິນໃຫ້ໄວເທົ່າທີ່ຈະໄວໄດ້ແລະຢ່າໃຫ້ຕົນເອງເປັນຫນີ້ຜູ້ໃດ. ລາວແນະນຳວ່າຕ້ອງຈັດການໃຫ້ດ່ວນທີ່ສຸດ. ຢ່າ**ໃຫ້ຕາຂອງເຈົ້າຫລັບລົງຢ່າໃຫ້ຫນັງຕາຂອງເຈົ້າງ້ວງໄປ**. ຖ້າພວກເຮົາເປັນຫນີ້ຄົນເທົ່າໃດ, ມັນກໍແຫ່ງເພີ້ມຄວາມເສັຽຫາຍແກ່ພວກເຮົາຫລາຍຍິ່ງຂຶ້ນ.

ການໃຊ້ຫນີ້ບຸນຄຸນເປັນພາບພົດໃຫ້ເຫັນເຖິງການຖືກຈັບຂອງສັດທີ່ຖືກບ້ວງແຮ້ວ. ຜູ້ທີ່ສລາດຈະຊອກຫາທາງອອກຢ່າງສັດຊື່ຄືກັນກັບ**ກວາງທີ່ຜ່າຍຫນີຈາກນາຍພານ, ແລະນົກທີ່ຢາກອອກຈາກແຮ້ວ**. ແນ່ນອນທີ່ສຸດ, ການຫ້າງແຮ້ວຈັບນົກແມ່ນລວມທັງເຫຍື່ອລໍ້ມັນ, ແລະນາຍພານກໍຈອບລີ້ຊ່ອນຕົວຖ້າກວາງຢ່າງຈົດຈໍ່. ການມີພັນທະສັນຍາທາງດ້ານການເງິນເບິ່ງເປືອກນອກຄືບໍ່ມີພັຍຮ້າຍແຮງ, ແຕ່ວ່າພວກເຮົາຄວນຈຳໄວ້ວ່າພວກຄົນທີ່ບໍ່ມີທັມມະຕໍ່ຜູ້ອື່ນກໍມີແຜນການຈະແຈ້ງໃນການຫ້າງແຮ້ວດັກຈັບຄົນອື່ນ. ເຫຍື່ອລໍ້ມັນປົກບັງດວງເບັດໄວ້ສເມີ, ແຕ່ວ່າດວງເບັດກໍລີ້ຢູ່ໃນທີ່ນັ້ນສເມີ.

ຂໍ້ພຣະຄຳເຫລົ່ານີ້ບໍ່ໄດ້ກ່າວລວມເຖິງການຊ່ວຍເຫລືອຜູ້ອື່ນທີ່ມີຄວາມຕ້ອງການຫລືການຕັດ ສິນໃຈຄັກແນ່ທີ່ຈະມີສ່ວນຖວາຍເປັນທຶນສ້າງໂບດ. ແທນທີ່ຈະເປັນຢ່າງນັ້ນ, ມັນເຕືອນພວກເຮົາໃຫ້ລະວັງບໍ່ໃຫ້ພວກເຮົາເອົາເງິນຫລືທຸຣະກິດມອບໄວ້ກັບຄົນຫລືສະຖານະການທີ່ພວກເຮົາບໍ່ສາມາດທີ່ຈະຄວບຄຸມມັນໄດ້. ນີ້ແມ່ນຈຸດໃຫຍ່ຂອງໂຊໂລໂມນກ່ຽວກັບການມີສ່ວນພົວພັນໃນພັນທະສັນຍາດ້ານການເງິນ: **ທ່ານໄດ້ມອບຕົວທ່ານເອງໄວ້ໃນກຳມືຂອງຜູ້ອື່ນ**. ການເຮັດແນວນັ້ນແມ່ນການປະດ້ານການເງິນຂອງທ່ານແລະຄອບຄົວໃຫ້ຢູ່ໃນຂັ້ນອັນຕະລາຍ.

**ຂ. <u>ສລາດໃນການເຮັດວຽກງານຂອງທ່ານ</u>** (ສຸພາສິດ 6:6-11)

ເພື່ອນເກົ່າຂອງຂ້າພະເຈົ້າຜູ້ນຶ່ງມັກເວົ້າແບບຕລົກວ່າ, "ການຂຍັນເຮັດວຽກບໍ່ໄດ້ຂ້າຜູ້ໃດ, ແຕ່ວ່າເປັນຫຍັງຈະຕ້ອງສ່ຽງ?" ຕາມຄວາມຈິງແລ້ວລາວກໍເປັນຄົນທີ່ຂຍັນເຮັດວຽກ. ຄຸນຄ່າຂອງການຂຍັນເຮັດວຽກການແມ່ນຄຳເຕືອນທີ່ໂຊໂລໂມນກ່າວແກ່ລູກຊາຍຂອງລາວ ແລະກໍເປັນຄຳກ່າວຂອງພຣະເຈົ້າຕໍ່ພວກເຮົາໃນມື້ນີ້ໂດຍຜ່ານພຣະຄຳຂອງພຣະອົງ.

ເມື່ອໂຊໂລໂມນເວົ້າວ່າ, **ຄົນຂີ້ຄ້ານເອີຍ ຈົ່ງເບິ່ງເອົາຊີວິດຂອງມົດ**! ລາວແນະນຳໃຫ້ຄົນຮຽນເອົາຕົວຢ່າງຈາກ ການເຮັດວຽກຫນັກແລະຄວາມເອົາໃຈໃສ່ຂອງແມງໄມ້. ພວກເຮົາຄວນຈະ**ສັງເກດໃນທາງຂອງພວກມັນແລະສລາດຄືພວກມັນ**. ໂຊໂລໂມນເລືອກເອົາແມງໄມ້ນ້ອຍໆມາເປັນແບບຢ່າງຂອງການເລີ້ມເຮັດວຽກເພາະວ່າພວກມັນ**ບໍ່ມີຜູ້ນຳ, ຜູ້ບໍຣິຫານ, ຫລືຜູ້ປົກຄອງ**, ແຕ່ມົດມັນເຮັດວຽກການຂອງພວກມັນ.

ການມີນິສັຍທີ່ຂຍັນເຮັດວຽກງານມີຜົນດີຕໍ່ການລ້ຽງເກືອຄອບຄົວສຳລັບປັດຈຸບັນແລະອະນາຄົດດ້ວຍ. ພວກມົດ**ຫາງຫາອາຫານຂອງພວກມັນໄວ້ໃນລະດູຮ້ອນ**ເມື່ອເຖິງ**ລະດູຫນາວມັນກໍຈະຍັງມີອາຫານ**. ແຕ່ວ່າ, ນີ້ບໍ່ໄດ້ປະຕິເສດເຖິງຜູ້ທີ່ຂຍັນເຮັດວຽກບາງຄົນອາດຈະບໍ່ສາມາດລ້ຽງກຸ້ມຄອບຄົວໃນປັດຈຸບັນແລະອະນາຄົດ. ພຣະຄັມພີໄດ້

ເຕືອນພວກເຮົາວ່າ "ດ້ວຍວ່າຜູ້ທຳງານກໍຄວນຈະໄດ້ຮັບຄ່າຈ້າງຂອງຕົນ" (ລູກາ 10:7). ຂນະທີ່ຫວັງໃຫ້ຄົນງານເຮັດວຽກເຕັມມື້ສົມກັບຄ່າແຮງງານ, ພຣະເຈົ້າກໍມີຄວາມຫວັງຕໍ່ພວກນາຍຈ້າງໃຫ້ເຮັດຕໍ່ພວກລູກຈ້າງຂອງຕົນຢ່າງຍຸດຕິທັມ.

ມີທາງນຶ່ງທີ່ພວກເຮົາສາມາດປັບປຸງຊີວິດການເຮັດວຽກງານຂອງພວກເຮົາ ຄືອົດສາພະຍາຍາມແລະຂຍັນຫມັ່ນພຽນໃນຫນ້າທີ່ການງານນັ້ນ. ຄົນຂີ້ຄ້ານມັກເວົ້າວ່າ**ຂໍນອນຈັກຫນ່ອຍກ່ອນ**, ປາຖນາເອົາການ**ນອນ**ເຫນືອກວ່າການອອກແຮງງານ. ທາງນຶ່ງທີ່ດີທີ່ສຸດໃນການຫລີກເວັ້ນຈາກຄວາມທຸກຍາກຄືການຂຍັນເຮັດວຽກງານ. ນີ້ກໍບໍ່ໄດ້ຫມາຍຄວາມວ່າຄົນງານທຸກຄົນເປັນຄົນຂີ້ຄ້ານ. ບາງຄົນກໍເຕັມໃຈເຮັດວຽກແຕ່ກໍບໍ່ສາມາດເພາະສະຖານະການບໍ່ອຳນວຍ. ໂຊໂລໂມນກ່າວເຖິງຜູ້ທີ່ບໍ່ຢາກເຮັດວຽກ, ບໍ່ແມ່ນຜູ້ບໍ່ສາມາດ.

## 3. <u>ເຕືອນກ່ຽວກັບການເຮັດທີ່ບໍ່ເປັນທັມ</u> (ສຸພາສິດ 6:12-15)

"ລະບຽບການດຳເນີນທຸຣະກິດ" ໄດ້ກາຍເປັນຫົວເຣື່ອງທີ່ນຳມາສົນທະນາກັນໃນຊ່ວງ 20 ປີທີ່ຜ່ານມານີ້. ເຫດຜົນຕົ້ນຕໍນັ້ນກໍໄດ້ແກ່ບໍຣິສັດໃຫຍ່ໆມີການຄົດໂກງໃນຊ່ວງປີ 1980 ແລະ 1990. ຂ້າພະເຈົ້າກໍເຫັນພ້ອມກັບຜູ້ທີ່ເວົ້າວ່າມັນບໍ່ມີກົດລະບຽບການດຳເນີນທຸຣະກິດ. ມັນມີສິ່ງທີ່ຖືກແລະສິ່ງທີ່ຜິດໃນການເຮັດ, ແລະມັນກໍບໍ່ມີຫຍັງຖ້າທ່ານເຮັດວຽກຫລືບໍ່ ກໍຕາມ. ພຣະເຈົ້າເຕືອນພວກເຮົາກ່ຽວກັບການເຮັດທີ່ບໍ່ເປັນທັມ.

ໂຊໂລໂມນກ່າວເຖິງຜູ້ທີ່**ສ້າງກໍ່ບັນຫາຢ່າງເນື່ອງນິດ**ຫລັງຈາກຈົບການສົນທະນາກ່ຽວກັບຄວາມຂີ້ຄ້ານແລະຄວາມຂຍັນຫມັ່ນພຽນໃນການເຮັດວຽກ. ຜູ້ທີ່ຂຍັນແລະດຸຫມັ່ນໃນການປະກອບອາຊີບຕາມທຳມະດາແລ້ວບໍ່ແມ່ນຜູ້ທີ່**ທຽວໄປກ່າວເຣື່ອງບໍ່ມີມູນຄວາມຈິງ**. ລາວຈະບໍ່ມີເວລາທີ່ຈະໄປແຜ່ຜາຍຄວາມບໍ່ດີໃນບ່ອນເຮັດວຽກ. ຜູ້ທີ່ໂຊໂລໂມນບັນລະຍາຍເຖິງແມ່ນເປັນທັງ**ຜູ້ບໍ່ມີຄ່າແລະຊົ່ວຊ້າ**. ພະນັກງານຜູ້ທີ່ມີຄ່າແມ່ນຜູ້ທີ່ປະພຶດດ້ວຍຄວາມສັດຊື່.

ຄຳເວົ້າຂອງຄົນທີ່ມີສັດຈະ ສຳຄັນຫລາຍ. ການເຮັດວຽກທີ່ໄດ້ຜົນຫລາຍໃນສາຍສຳພັນແມ່ນຂຶ້ນຢູ່ເທິງພື້ນຖານແຫ່ງຄວາມໄວ້ວາງໃຈ. ນິສັຍແລະຄວາມສາມາດກາຍເປັນບັນຫາແທ້. ຂ້ອຍສາມາດວາງໃຈໃນສິ່ງທີ່ເຈົ້າວ່າເຈົ້າຈະເຮັດນັ້ນໄດ້ບໍ່? ຂ້ອຍສາມາດວາງໃຈໃນສິ່ງທີ່ເຈົ້າຈະເຮັດສຸດຄວາມສາມາດແລະດີທີ່ສຸດບໍ່?

ແມ່ນຫຍັງຄືເປົ້າຫມາຍຂອງໂຊໂລໂມນໃນການໃຫ້ຄຳແນະນຳແນວນີ້ແກ່ລູກຊາຍຂອງລາວ? ແນ່ນອນລາວຕ້ອງການໃຫ້ລູກຂອງລາວຫລີກເວັ້ນຈາກຄວາມຊົ່ວຮ້າຍ, ແຕ່ວ່າລາວຍັງຕ້ອງການໃຫ້ລູກຊາຍຂອງລາວລະວັງຕໍ່ບາງຄົນທີ່ລາວຈະມີທຸຣະກິດຮ່ວມທີ່ບໍ່ສັດຊື່ແລະໄວ້ວາງໃຈບໍ່ໄດ້.

ພະນັກງານທີ່ຊອບທັມຈະເບິ່ງຄົນຢ່າງນັ້ນອອກໄດ້ຢ່າງໃດ? ໃນທີ່ສຸດ, ຄົນຊົ່ວຮ້າຍກໍວາງແຜນ**ຊົ່ວຊຶ່ງເຕັມລົ້ນໃນຫົວໃຈຂອງລາວ**ບໍ່ແມ່ນຫລື? ຄວາມຊົ່ວຮ້າຍສ່ວນຫລາຍແມ່ນເຕັມໄປດ້ວຍເລ້ຫລ່ຽມ. ແຕ່ເຖິງແມ່ນວ່າຈະໃຊ້ການສົນທະນາແບບບໍ່ອອກສຽງເຊັ່ນການຂຍິບຕາ, ການໃຊ້ສັນຍານ, ການຍົກຄິ້ວຫລິ່ວຕາກໍສາມາດສັງເກດຮູ້ໄດ້. ຈົ່ງລະວັງພວກຄົນທີ່ມີການປະພຶດແລະຄຳເວົ້າທີ່ບໍ່ຊື່ຕົງ. ການຮູ້ໄດ້ແຈ້ງແທ້ໆນັ້ນແມ່ນຈາກຄຳເວົ້າມັນບໍ່ສອດຄ່ອງແລະເວົ້າຂ້ອງໆ ຄາໆ. ຫລີກເວັ້ນຈາກຜູ້ນັ້ນໃຫ້ໄກເທົ່າທີ່ຈະໄກໄດ້.

ເຖິງແມ່ນວ່າຜູ້ຊົ່ວຮ້າຍອາດຈະສາມາດຫລອກໂດຍທີ່ເຮົາຈັບພິລຸດບໍ່ໄດ້, **ບັນຫາ**ກໍລໍຢູ່ຂ້າງຫນ້າລາວຢູ່. ໃນທີ່ສຸດເຫດການຕ້ອງເກີດຂຶ້ນທັນທີ. ຄົນຜູ້ນັ້ນກໍຈະໄດ້ຮັບຄວາມອັບອາຍເຫລືອຫລາຍ-ເຫນືອການປົວແປງໃຫ້ດີໄດ້.

ມີໂບດແຫ່ງນຶ່ງໄດ້ຊື້ຕຶກທີ່ຕັ້ງຕິດຢູ່ໃກ້ໂບດນັ້ນເພື່ອຈະສ້າງບ່ອນຈອດຣົດເພີ້ມຂຶ້ນ. ຫລາຍອາທິດຕໍ່ມາກໍບໍ່ມີຮ່ອງຮອຍອັນໃດເກີດຂຶ້ນເລີຍ, ສະມາຊິກຂອງໂບດກໍເລີ້ມສົງສັຍວ່າມັນຄືໃຊ້ເວລາດົນແທ້. ພວກເຂົາເຈົ້າບໍ່ຮູ້ວ່າພວກຄົນງານເຮັດວຽກຢູ່ຂ້າງໃນ, ເພື່ອຕຽມທຳລາຍຕຶກນັ້ນ. ວັນພຸດຕອນແລງເມື່ອພວກສະມາຊິກມາເຖິງໂບດກໍເຫັນວ່າຕຶກນັ້ນຍຸບພັງລົງ. ຂນະທີ່ເບິ່ງຂ້າງນອກຄືບໍ່ມີຫຍັງເກີດຂຶ້ນແຕ່ເມື່ອເຖິງຍາມກໍມີສິ່ງເກີດຂຶ້ນຢ່າງກະທັນຫັນ-ມັນກໍເຫມືອນກັນກັບ-ບັນຫາຂອງພວກຄົນຊົ່ວຮ້າຍບໍ່ດົນກໍເກີດຄວາມຊົ່ວຮ້າຍປາກົດອອກມາໃຫ້ເຫັນຢ່າງກະທັນຫັນ.

# ບົດຮຽນຊີວິດ

ພຣະທັມຂອງພຣະເຈົ້າເຕັມໄປດ້ວຍຄຳແນະນຳທີ່ສລາດແລະເປັນຫລັກການຂອງຊີວິດເພື່ອຊ່ວຍພວກເຮົາໃຫ້ເຮັດວຽກທຳການທີ່ພຣະອົງປະທານໃຫ້ນັ້ນຢ່າງເບີກບານ ຊົມຊື່ນ. ເຮັດວຽກດ້ວຍຄວາມດຸຫມັ່ນ, ເຮັດວຽກດ້ວຍຄວາມສລາດ, ແລະເຮັດວຽກດ້ວຍຄວາມສັດຊື່-ນີ້ຄືວິທີທີ່ພວກເຮົາສາມາດມີປະສົບການທີ່ດີກວ່າໃນຊີວິດຂອງການທຳງານ, ບໍ່ວ່າເປັນວຽກຢູ່ຂ້າງໃນຫລືນອກບ້ານ.

ນີ້ຄືຄຳຖາມບາງຢ່າງໃນຂນະທີ່ທ່ານຊອກຫາການເຮັດວຽກການທີ່ສລາດກວ່າແລະມີປະສົບການທີ່ດີກວ່າໃນຊີວິດຂອງການທຳງານ.

- ການຕັດສິນໃຈທຸກຢ່າງໃນຄອບຄົວ ໃຫ້ເພິ່ງໃນພຣະເຈົ້າ. ອ່ານພຣະຄັມພີແລະອະທິຖານເພື່ອຂໍການຊົງນຳແລະການຊີ້ນຳຈາກພຣະອົງ
- ເປັນຜູ້ທີ່ຮັບຄຳສອນແລະຮຽນຮູ້ຈາກປະສົບການຂອງຄົນອື່ນຜູ້ຊຶ່ງຮູ້ຫລາຍກວ່າເຮົາ. ຮຽນຮູ້ຈາກຄວາມຜິດພາດຂອງເຮົາເອງນຳ ແຕ່ຊີວິດເຮົາສັ້ນຫລາຍຖ້າເຮົາຈະຕ້ອງເຮັດຜິດທຸກໆ ຢ່າງເພື່ອຈະຮຽນຮູ້ຈາກຄວາມຜິດຂອງຕົນເອງ. ຄົນທີ່ສລາດຈະຮຽນຮູ້ຈາກຄວາມຜິດຂອງຄົນອື່ນ.
- ເຝົ້າລະວັງອິດທິພົນຂອງຂ່າວສານຕ່າງໆ ໃນເຮືອນຂອງເຮົາ ໂດຍສະເພາະເຣື່ອງເພດແລະເຫລົ້າ
- ຫລີກເວັ້ນຈາກອິດທິພົນທີ່ເປັນພັຍເຊັ່ນເຫລົ້າແລະຢາເສບຕິດທີ່ມັນຈະຄວບຄຸມຊີວິດເຮົາ
- ປະຕິເສດທາງທີ່ຈະນຳໄປສູ່ຄວາມຟູມເຟືອຍ ສແວງຫາສິ່ງທີ່ມີປໂຍດແລະມີຄຸນຄ່າ ຫຼີກເວັ້ນຈາກການປຽບທຽບທີ່ບໍ່ຈຳເປັນວ່າທ່ານມີຫຽັງແດ່ ແລະຄົນອື່ນມີຫຽັງແດ່.

ຄວາມຊົ່ວຮ້າຍໄດ້ຍືນຢູ່ຢູ່ຫນ້າປະຕູເຮືອນຂອງພວກເຮົາ ແຕ່ເຮົາບໍ່ຈຳເປັນຕ້ອງຢ້ານກົວ ຖ້າເຮືອນເຮົາ(ຄອບຄົວເຮົາ)ຫາກສ້າງຂຶ້ນຈາກຄວາມຈິງ ແລະຢູ່ເທິງພື້ນຖານຂອງພຣະເຈົ້າ.

ອຸປຖັມໂດຍ ລາວຊາວເທິນບັບຕິສສັມພັນ www.lsbf.org by PA